ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**ສຳນັກງານນາຍົກລັດຖະມົນຕີ** ເລກທີ 79 / ນຍ
ນະຄອນຫຼວງວຽງຈັນ,ວັນທີ 27 /02/2007

# ດຳລັດ

ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
ຂອງກະຊວງປ້ອງກັນຄວາມສະຫງົບ.

- ອີງຕາມ ລັດຖະທຳມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.
- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.
- ອີງຕາມ ການສະເໜີຂອງຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 078/ຄຈສພ, ລົງວັນທີ 26/02/2007.

**ນາຍົກລັດຖະມົນຕີອອກດຳລັດ**

## ໝວດທີ I
## ວ່າດ້ວຍທີ່ຕັ້ງ ແລະ ພາລະບົດບາດ.

**ມາດຕາ 1: ທີ່ຕັ້ງຂອງກະຊວງປ້ອງກັນຄວາມສະຫງົບ.**

ກະຊວງປ້ອງກັນຄວາມສະຫງົບ ( ຂຽນເປັນຕົວອັກສອນຫຍໍ້ວ່າ ປກສ ) ແມ່ນການຈັດຕັ້ງໜຶ່ງ ທີ່ຢູ່ພາຍໃຕ້ການຊີ້ນຳນຳພາໂດຍກົງ ແລະ ຮອບດ້ານຂອງກົມການເມືອງສູນກາງພັກ ແລະ ຄະນະເລຂາທິການສູນກາງພັກ, ແມ່ນການຈັດຕັ້ງຄຸ້ມຄອງລັດຂັ້ນມະຫາພາກໃນກົງຈັກລັດຖະ ບານ.

**ມາດຕາ 2 : ພາລະບົດບາດຂອງກະຊວງປ້ອງກັນຄວາມສະຫງົບ.**

ກະຊວງປ້ອງກັນຄວາມສະຫງົບ ມີພາລະບົດບາດເປັນເສນາທິການໃຫ້ແກ່ກົມການເມືອງສູນກາງພັກ ແລະ ລັດຖະບານຄືດັ່ງລຸ່ມນີ້ :

- ກຳນົດຍຸດທະສາດກ່ຽວກັບວຽກງານປົກປັກຮັກສາຄວາມສະຫງົບ ທາງດ້ານການເມືອງ ແລະ ຄວາມເປັນລະບຽບຮຽບຮ້ອຍສັງຄົມຂອງປະເທດຊາດ.

- ກໍ່ສ້າງກຳລັງປ້ອງກັນຄວາມສະຫງົບ ໃຫ້ປອດໃສເຂັ້ມແຂງ ແລະ ຮອບດ້ານ.

- ຈັດຕັ້ງປະຕິບັດແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທົ່ວປວງຊົນຮອບດ້ານ ຂອງພັກ, ປົກປັກຮັກສາ ລະບອບ ປະຊາທິປະໄຕ ປະຊາຊົນ ໃຫ້ໝັ້ນຄົງ.

- ປະຕິບັດຕາມໜ້າທີ່ ແລະ ຂອບເຂດສິດໃນການຄຸ້ມຄອງບໍລິຫານລັດຕາມກົດໝາຍ ວ່າດ້ວຍ ລັດຖະບານແຫ່ງ ສ ປ ປ ລາວ.

## ໝວດທີ II
## ວ່າດ້ວຍໜ້າທີ່ ແລະ ຂອບເຂດສິດ.

<u>**ມາດຕາ 3:**</u> ກະຊວງປ້ອງກັນຄວາມສະຫງົບມີໜ້າທີ່ ດັ່ງນີ້:

3.1. ຄົ້ນຄວ້າຫັນເອົາແນວທາງນະໂຍບາຍປ້ອງກັນຊາດ - ປ້ອງກັນຄວາມສະຫງົບ ທົ່ວປວງຊົນຢ່າງຮອບດ້ານຂອງພັກ ມາສ້າງເປັນແຜນຍຸດທະສາດ, ຫັນເປັນກົດໝາຍ, ດຳລັດ, ຂໍ້ກຳນົດລະບຽບການຕ່າງໆ, ຫັນເປັນແຜນການ, ໂຄງການວຽກງານຂອງກະຊວງໃນແຕ່ລະໄລຍະເພື່ອຄຸ້ມຄອງລັດ, ຄຸ້ມຄອງສັງຄົມໃນຂະແໜງການຂອງຕົນ.

3 .2. ປົກປັກຮັກສາພັກ , ອຳນາດລັດ , ໝາກຜົນຂອງການປະຕິວັດ ແລະ ຮັກສາຄວາມສະຫງົບທາງດ້ານການເມືອງ. ຊອກຮູ້ກົນອຸບາຍ , ການຈັດຕັ້ງ ແລະ ການເຄື່ອນໄຫວຂອງພວກຟື້ນປະຕິວັດ ພ້ອມທັງວາງແຜນການ, ມາດຕະການຕອບຕ້ານ.

3 .3. ປົກປັກຮັກສາຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ຊອກຮູ້ການຈັດຕັ້ງ ແລະ ການເຄື່ອນໄຫວຂອງພວກກະທຳຜິດທາງອາຍາ ພ້ອມທັງວາງແຜນການ, ມາດຕາການຕອບຕ້ານ. ຄຸ້ມຄອງການປະຕິບັດລະບຽບການສັນຈອນ, ຍານພາຫະນະ ແລະ ຜູ້ຂັບຂີ່. ປ້ອງກັນສະກັດກັ້ນອັກຄີໄພ , ຈັດຕັ້ງຄຸ້ມຄອງບັນດາຄ້າຍຄຸມຂັງດັດສ້າງ; ຊີ້ນຳ, ຕິດຕາມ ແລະ ກວດກາການເຄື່ອນໄຫວຂອງ ບັນດາຫົວໜ່ວຍທຸລະກິດບໍລິການຄວາມປອດໄພໃນຂອບເຂດທົ່ວປະເທດ.

3. 4. ກໍ່ສ້າງຮາກຖານການເມືອງ, ປຸກລະດົມຂົນຂວາຍປະຊາຊົນ ເຂົ້າຮ່ວມວຽກງານປ້ອງກັນຄວາມສະຫງົບ. ຂຶ້ນທະບຽນສຳມະໂນຄົວ,ອອກບັດປະຈຳຕົວໃຫ້ແກ່ພົນລະເມືອງລາວ, ຊາວຕ່າງດ້າວ, ຄົນຕ່າງປະເທດ ແລະ ຄຸ້ມຄອງໃຫ້ແໜ້ນ. ປັບປຸງ ປ ກ ສ ກຸ່ມບ້ານ ແລະ ປກສ ບ້ານ ໃຫ້ໜັກແໜ້ນເຂັ້ມແຂງ.

3.5. ປົກປັກຮັກສາຄວາມປອດໄພໃຫ້ແກ່ອົງການນຳຂອງພັກ - ລັດ, ປ້ອງກັນຊີວິດ ແລະ ສິດຜົນປະໂຫຍດອັນຊອບທຳຂອງປະຊາຊົນບັນດາເຜົ່າ; ປ້ອງກັນສຳນັກງານອົງການ, ພື້ນຖານເສດຖະກິດ - ສັງຄົມຂອງຊາດ, ປ້ອງກັນກອງປະຊຸມ, ພິທີການສຳຄັນລະດັບຊາດ

ແລະ ສາກົນ; ປ້ອງກັນແຂກຕ່າງປະເທດ, ສະຖານທູດ, ອົງການຈັດຕັ້ງສາກົນກໍ່ຄືຄົນຕ່າງປະເທດຢູ່ ສປປ ລາວໃຫ້ມີ ຄວາມປອດໄພ.

3.6. ປົກປັກຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຢູ່ໃນທ້ອງຖິ່ນທີ່ມີຊາຍແດນຕິດກັບບັນດາປະເທດເພື່ອນບ້ານໃກ້ຄຽງ; ຄຸ້ມຄອງ ແລະ ກວດກາຄົນເຂົ້າ - ອອກເມືອງຕາມດ່ານສາກົນ ຫຼື ດ່ານທ້ອງຖິ່ນຕ່າງໆ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ ຂອງ ສ ປ ປ ລາວ ແລະ ປະເທດເພື່ອນບ້ານວາງອອກ.

3.7. ກໍ່ສ້າງກຳລັງປ້ອງກັນຄວາມສະຫງົບ ໃຫ້ໜັກແໜ້ນ ເຂັ້ມແຂງຮອບດ້ານ, ເວລາໃດກໍ່ຈົງຮັກພັກດີຕໍ່ພັກ, ປະເທດຊາດ ແລະ ປະຊາຊົນ, ມີຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງ, ອົງອາດກ້າຫານຍອມເສຍສະຫຼະ ເພື່ອຜົນປະໂຫຍດລວມຂອງຊາດ ; ມີລະບຽບວິໄນເຂັ້ມງວດ, ດຳລົງຊີວິດປອດໃສ; ມີຄວາມຮູ້ຄວາມສາມາດທາງດ້ານວິຊາສະເພາະ ແລະ ວິທະຍາສາດເຕັກນິກ; ຮູ້ເຄົາລົບ ແລະ ບໍລິການຮັບໃຊ້ປະຊາຊົນ, ຮູ້ປຸກລະດົມຂົນຂວາຍປະຊາຊົນ ເຂົ້າຮ່ວມເຮັດວຽກງານປ້ອງກັນຄວາມສະຫງົບຢ່າງເປັນຂະບວນກວ້າງຂວາງ.

3.8. ສ້າງແຜນການ,ແຜນງົບປະມານ, ຄຸ້ມຄອງ ແລະ ກວດກາການຈັດຕັ້ງປະຕິບັດງົບປະມານລາຍຮັບ - ລາຍຈ່າຍຢູ່ໃນຂະແໜງການຂອງຕົນ , ກໍ່ສ້າງພື້ນຖານວັດຖຸເຕັກນິກສ້າງພະລາທິການກັບທີ ເພື່ອແກ້ໄຂຊີວິດການເປັນຢູ່ ແລະ ເບິ່ງແຍງຮັກສາສຸຂະພາບຂອງພະນັກງານ - ນັກຮົບກຳລັງປ້ອງກັນຄວາມສະຫງົບໃຫ້ດີ.

3.9. ພົວພັນຮ່ວມມືກັບອົງການກ່ຽວຂ້ອງຕ່າງໆ ຂອງບັນດາປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນອື່ນໆ... ຕາມການຕົກລົງອະນຸມັດຂອງລັດຖະບານ.

3.10. ປະຕິບັດໜ້າທີ່ອື່ນໆທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍ ແລະ ຕາມການມອບໝາຍຂອງ ລັດຖະບານ.

<u>ມາດຕາ 4:</u> ຂອບເຂດສິດຂອງກະຊວງປ້ອງກັນຄວາມສະຫງົບມີ ດັ່ງນີ້:

4.1. ສ້າງຮ່າງມະຕິ , ກົດໝາຍ , ດຳລັດ , ສ້າງຂໍ້ກຳນົດ , ກົດລະບຽບ, ມາດຕາການຕ່າງໆ ທີ່ພົວພັນເຖິງຂະແໜງການວິຊາສະເພາະຂອງຕົນ; ໃຫ້ການແນະນຳ , ອອກແຈ້ງການເພື່ອໃຫ້ທຸກອົງການຈັດຕັ້ງຂອງລັດ,ພົນລະເມືອງລາວ ແລະ ອົງການຈັດຕັ້ງຕ່າງປະເທດທີ່ມາເຄື່ອນໄຫວຢູ່ ສປປ ລາວ ໃຫ້ເຄົາລົບ ແລະ ປະຕິບັດ. ນຳໃຊ້ບັນດາມາດຕະການອັນຈຳເປັນທີ່ກຳນົດໄວ້ໃນກົດໝາຍ ເພື່ອປົກປັກຮັກສາຄວາມສະຫງົບ ແລະ ສິດຜົນປະໂຫຍດອັນຊອບທຳຂອງພົນລະເມືອງ. ອອກຄຳສັ່ງ,ແຈ້ງການຕ່າງໆຢູ່ພາຍໃນຂະແໜງການຕາມສາຍຕັ້ງ ເພື່ອຮັບປະກັນການຄຸ້ມຄອງບັນຊາວຽກງານໃນຂອບເຂດທົ່ວປະເທດ.

4.2. ຄົ້ນຄ້ວານຳສະເໜີໃຫ້ນາຍົກລັດຖະມົນຕີ ອອກຄຳສັ່ງໃຫ້ບັນດາກະຊວງ,ອົງການ ແລະ

ທ້ອງຖິ່ນດັດແປງ ຫຼື ຢຸດຕິການເຄື່ອນໄຫວທີ່ບໍ່ຮັບປະກັນຄວາມປອດໄພຕໍ່ຊີວິດ, ສຸຂະພາບ, ກຽດສັກສີ ແລະ ຊັບສິນບັດຂອງພົນລະເມືອງ. ໃນກໍລະນີສຸກເສີນຮີບດ່ວນ, ກະຊວງປ້ອງກັນຄວາມສະຫງົບມີສິດອອກຄໍາສັ່ງໃຫ້ພາກສ່ວນ ຫຼື ບຸກຄົນກ່ຽວຂ້ອງຢຸດຕິການເຄື່ອນໄຫວຊົ່ວຄາວໄດ້, ແຕ່ຕ້ອງມີຄວາມຮັບຜິດຊອບຕໍ່ສູນກາງພັກ ແລະ ລັດຖະບານ.

4.3. ປັບປຸງ, ສ້າງຕັ້ງ ຫຼື ຍຸບເລີກກົງຈັກການຈັດຕັ້ງ ( ຂັ້ນກົມນ້ອຍທີ່ຂຶ້ນກັບກົມໃຫຍ່ ກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ນະຄອນຫຼວງ, ກອງບັນຊາການປ້ອງກັນຄວາມສະຫງົບ ເມືອງ, ກອງພັນ, ພະແນກ ). ແຕ່ງຕັ້ງ, ຍົກຍ້າຍ, ປະຕິບັດນະໂຍບາຍຍ້ອງຍໍ, ເລື່ອນຊັ້ນ, ປະຕິບັດວິໄນ, ປົດໜ້າທີ່ພະນັກງານນັບແຕ່ຊັ້ນພັນໂທ ລົງມາ.

4.4. ເລືອກເຟັ້ນເອົາພະນັກງານຜູ້ທີ່ມີມາດຖານເງື່ອນໄຂຈາກພາກສ່ວນຕ່າງໆ ຂອງລັດມາເຮັດວຽກງານປ້ອງກັນຄວາມສະຫງົບດ້ວຍຮູບການທີ່ເໝາະສົມ, ຈັດວາງພະນັກງານວິຊາສະເພາະໄປປະຈໍາຢູ່ບັນດາການຈັດຕັ້ງຂອງລັດ ແລະ ເອກະຊົນທີ່ມີຄວາມຈໍາເປັນຢູ່ພາຍໃນ ແລະ ຕ່າງປະເທດ ຕາມຄວາມຕ້ອງການຂອງວຽກງານໃນແຕ່ລະໄລຍະ.

4.5. ພົວພັນປະສານສົມທົບກັບທຸກອົງການຈັດຕັ້ງຂອງພັກ-ລັດ,ອົງການຈັດຕັ້ງມະຫາຊົນ ຂອງສາກົນ ແລະ ພົນລະເມືອງເພື່ອພ້ອມກັນປະຕິບັດກົດໝາຍ, ນະໂຍບາຍ, ດໍາລັດ ແລະ ຄໍາສັ່ງຕ່າງໆ ຂອງລັດຖະບານ ກ່ຽວກັບວຽກງານປ້ອງກັນຄວາມສະຫງົບ. ສົມທົບກັບກະຊວງການຕ່າງ ປະເທດຄົ້ນຄ້ວາ ແລະ ສະໜອງຂໍ້ມູນ ທີ່ຈໍາເປັນກ່ຽວກັບການອະນຸມັດວິຊາເຂົ້າ - ອອກ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຫຼື ຫ້າມເຂົ້າ - ອອກຕໍ່ບັນດາປະເພດ ຄົນທີ່ບໍ່ເພິ່ງປາຖະໜານັບທັງຄົນລາວ ແລະ ຄົນຕ່າງປະເທດ.

4.6. ດໍາເນີນການສືບສວນ - ສອບສວນ ປະກອບເອກະສານສໍານວນຄະດີສົ່ງໃຫ້ໄອຍະການປະຊາຊົນສູງສຸດ ເພື່ອສັ່ງຟ້ອງ ຜູ້ກະທໍາຜິດລະບຽບກົດໝາຍຂອງ ສ ປ ປ ລາວ.

4.7. ຄົ້ນຄ້ວາອະນຸມັດສ້າງຕັ້ງ ຫຼື ຍຸບເລີກ ທັງຊີ້ນໍາ ນໍາພາກໍ່ສ້າງຄຸ້ມຄອງນໍາໃຊ້ບັນດາ ບໍລິສັດຮັກສາຄວາມປອດໄພທີ່ເຄື່ອນໄຫວ ຢູ່ດິນແດນ ສ ປ ປ ລາວ.

4.8. ດໍາເນີນການກວດກາ - ກວດການ ໃນຂະແໜງການຂອງຕົນ ຢ່າງຮອບດ້ານ, ເປັນປະຈໍາ ແລະ ດໍາເນີນຄະດີກ່າວຟ້ອງຜູ້ລະເມີດກົດໝາຍ, ຂໍ້ກໍານົດ, ກົດລະບຽບ ແລະ ລະບຽບການທີ່ຂະແໜງການ ຂອງຕົນໄດ້ວາງອອກຕາມລະບຽບກົດໝາຍ.

4.9. ອະນຸຍາດສັ່ງຈ່າຍງົບປະມານໃນຂະແໜງການຂອງຕົນ ຕາມທີ່ລັດຖະບານໄດ້ສະເໜີຜ່ານສະພາແຫ່ງຊາດຮັບຮອງເອົາແລ້ວ.

4.10. ພົວພັນເຈລະຈາເຊັນສັນຍາ,ອະນຸສັນຍາ, ຂໍ້ຜູກພັນກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນກ່ຽວກັບວຽກງານປ້ອງກັນຄວາມສະຫງົບຕາມການອະນຸມັດຂອງລັດຖະບານ.

4.11. ປະຕິບັດສິດອື່ນໆທີ່ໄດ້ກໍານົດໄວ້ໃນກົດໝາຍແລະຕາມການມອບໝາຍຂອງລັດຖະບານ.

## ໝວດທີ III
## ວ່າດ້ວຍໂຄງປະກອບການຈັດຕັ້ງ

**ມາດຕາ 5:** ໂຄງປະກອບກົງຈັກ ການຈັດຕັ້ງຂອງກະຊວງປ້ອງກັນຄວາມສະຫງົບ ມີ 3 ກົມໃຫຍ່ 1 ຫ້ອງວ່າການ, 6 ກົມ, 3 ກອງບັນຊາການແລະ 1 ວິທະຍາຄານປ້ອງກັນຄວາມສະຫງົບແຫ່ງຊາດ ຄື :

1. ກົມໃຫຍ່ການເມືອງປ້ອງກັນຄວາມສະຫງົບ.
2. ກົມໃຫຍ່ປ້ອງກັນຄວາມສະຫງົບ.
3. ກົມໃຫຍ່ຕໍາຫຼວດ.
4. ຫ້ອງວ່າການກະຊວງປ້ອງກັນຄວາມສະຫງົບ.
5. ກົມສືບຂ່າວ.
6. ກົມພະລາທິການ.
7. ກົມຄຸ້ມຄອງພົນລະເມືອງ ແລະ ປ ກ ສ ບ້ານ.
8. ກົມສື່ສານ .
9. ກົມກວດກາ - ກວດການ .
10. ກົມຄົ້ນຄ້ວາປະຫັວດສາດ ແລະ ວິທະຍາສາດປ້ອງກັນຄວາມສະຫງົບ .
11. ກອງບັນຊາການປ້ອງກັນສູນກາງ.
12. ກອງບັນຊາການປ້ອງກັນທີ່ຕັ້ງ.
13. ກອງບັນຊາການປ້ອງກັນເຄື່ອນທີ່.
14. ວິທະຍາຄານປ້ອງກັນຄວາມສະຫງົບແຫ່ງຊາດ.

ຢູ່ບັນດາກົມໃຫຍ່, ຫ້ອງວ່າການກະຊວງ, ມີກົມນ້ອຍຂຶ້ນກັບ; ຢູ່ກົມ, ວິທະຍາຄານມີພະແນກ,ຫ້ອງການແລະ ກອງວິຊາສະເພາະຕ່າງໆ; ຢູ່ກອງບັນຊາການມີຫ້ອງ, ກອງພັນ, ກອງຮ້ອຍ, ໝວດ ແລະ ໝູ່ ຕາມຄວາມຕ້ອງການຂອງວຽກງານ.

**ມາດຕາ 6: ໂຄງປະກອບບຸກຄະລາກອນ.**

6.1. ກະຊວງປ້ອງກັນຄວາມສະຫງົບ ມີລັດຖະມົນຕີວ່າການ 1 ທ່ານ ເຊິ່ງໄດ້ຮັບການແຕ່ງຕັ້ງ ຫຼື ປົດຕໍາແໜ່ງໂດຍປະທານປະເທດ ຕາມການສະເໜີຂອງນາຍົກລັດຖະມົນຕີ ແລະ ໄດ້ຮັບການຮັບຮອງ ຈາກສະພາແຫ່ງຊາດ.

6.2. ລັດຖະມົນຕີວ່າການແມ່ນ ສະມາຊິກລັດຖະບານ, ເປັນຫົວໜ້າກະຊວງ ເປັນຜູ້ບັນຊາການ

ກອງກຳລັງປ້ອງກັນຄວາມສະຫງົບ ມີຄວາມຮັບຜິດຊອບໃນການປະຕິບັດ ພາລະບົດບາດ ຂອບເຂດສິດ ແລະ ໜ້າທີ່ຂອງຕົນຕາມກົດໝາຍ ວ່າດ້ວຍລັດຖະບານແຫ່ງ ສປປ ລາວ ແລະ ປະຕິບັດຕາມດຳລັດ ເລກທີ່ 220/ ນຍ, ລົງວັນທີ19/11/1998 ເປັນຜູ້ຮັບຜິດຊອບຢ່າງເດັດຂາດໂດຍກົງຕໍ່ການຄຸ້ມຄອງ, ບັນຊາແລະ ຈັດຕັ້ງປະຕິບັດ ແນວທາງນະໂຍບາຍຂອງພັກ - ລັດ ກ່ຽວກັບວຽກງານປ້ອງກັນຄວາມສະຫງົບ. ຮັບຜິດຊອບຕໍ່ຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງໃນຂະແໜງການຂອງຕົນຕໍ່ນາຍົກລັດຖະມົນຕີ, ເປັນຜູ້ລົງລາຍເຊັນໃນເອກະສານຕ່າງໆໃນນາມກະຊວງ, ເປັນຜູ້ພົວພັນກັບລັດຖະບານ. ໃນກໍລະນີຕິດຂັດ ຫຼື ໄປເຄື່ອນໄຫວວຽກງານທາງໄກ ລັດຖະມົນຕີວ່າການ ມອບສິດຊົ່ວຄາວໃຫ້ ລັດຖະມົນຕີຊ່ວຍວ່າການທ່ານໃດ ທ່ານໜຶ່ງເປັນຜູ້ວ່າການແທນ.

6.3. ລັດຖະມົນຕີວ່າການ ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ແຕ່ງຕັ້ງ ຫຼື ປົດຕຳແໜ່ງຫົວໜ້າ ແລະ ຮອງຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ; ຫົວໜ້າ ແລະ ຮອງກອງບັນຊາການປ້ອງກັນຄວາມສະຫງົບເມືອງ ບົນພື້ນຖານການປຶກສາຫາລື ເປັນເອກະພາບກັບເຈົ້າ ແຂວງ , ເຈົ້າຄອງນະຄອນ ແລະ ເຈົ້າເມືອງ.

6.4. ກະຊວງປ້ອງກັນຄວາມສະຫງົບມີລັດຖະມົນຕີຊ່ວຍວ່າການຈຳນວນໜຶ່ງ ເຊິ່ງຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງ ໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງລັດຖະມົນຕີວ່າການ ກະຊວງປ້ອງກັນຄວາມສະຫງົບ ແລະ ຄະນະຈັດຕັ້ງ ສູນກາງພັກ.

6.5. ລັດຖະມົນຕີຊ່ວຍວ່າການ ເປັນຜູ້ຊ່ວຍວຽກລັດຖະມົນຕີວ່າການໃນການນຳພາ, ອຳນວຍຄວບຄຸມວຽກງານລວມຂອງກະຊວງ; ຄຸ້ມຄອງ, ບັນຊາແລະ ຈັດຕັ້ງປະຕິບັດແນວທາງນະໂຍບາຍ ຂອງພັກແລະ ລັດຖະບານຢູ່ໃນຂະແໜງການປ້ອງກັນຄວາມສະຫງົບ, ພ້ອມກັນນັ້ນກໍ່ຮັບຜິດຊອບລົງເລິກວຽກງານໃດໜຶ່ງຕາມການມອບໝາຍຂອງລັດຖະມົນຕີວ່າການ.

6.6. ຫົວໜ້າ,ຮອງຫົວໜ້າບັນດາກົມໃຫ່ຍ ແລະ ຫ້ອງວ່າການກະຊວງ; ຫົວໜ້າກົມ, ຫົວໜ້າກອງບັນຊາການແລະ ຜູ້ອຳນວຍການວິທະຍາຄານປ້ອງກັນຄວາມສະຫງົບແຫ່ງຊາດ ທີ່ຂຶ້ນໂດຍກົງກັບກະຊວງ, ການແຕ່ງຕັ້ງ ຫຼື ປົດຕຳແໜ່ງແມ່ນອີງໃສ່ກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສ ປ ປ ລາວ ກຳນົດ.

ບັນດາຫົວໜ້າ, ຮອງກົມໃຫ່ຍ ແລະ ຫ້ອງວ່າການກະຊວງ; ບັນດາຫົວໜ້າກົມ, ກອງບັນຊາການ ແລະ ຜູ້ອຳນວຍການວິທະຍາຄານປ້ອງກັນຄວາມສະຫງົບແຫ່ງຊາດ ມີໜ້າທີ່ຊ່ວຍ ລັດຖະມົນຕີໃນການຄົ້ນຄວ້າ, ຄຸ້ມຄອງບັນຊາ ແລະ ຈັດຕັ້ງປະຕິບັດວຽກງານວິຊາສະເພາະຕາມສາຍຕັ້ງໃນຂອບເຂດທົ່ວປະເທດ. ຮັບຜິດຊອບໂດຍກົງຕໍ່ຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງຂອງວຽກງານທີ່ຕົນຮັບຜິດຊອບ.

6.7. ຫົວໜ້າ, ຮອງຫົວໜ້າກົມນ້ອຍ ແລະ ທຽບເທົ່າທີ່ຂຶ້ນກັບຫ້ອງວ່າການກະຊວງແລະ ກົມໃຫຍ່; ຮອງກົມ, ຮອງກອງບັນຊາການ ແລະ ຮອງຜູ້ອຳນວຍການວິທະຍາຄານປ້ອງກັນຄວາມສະຫງົບແຫ່ງຊາດ ແມ່ນໄດ້ຮັບການແຕ່ງຕັ້ງ ຫຼື ປົດຕຳແໜ່ງຈາກລັດຖະມົນຕີວ່າການກະຊວງປ້ອງກັນຄວາມສະຫງົບ ບົນພື້ນຖານການສະເໜີຂອງກົມກອງກ່ຽວຂ້ອງແລະກົມໃຫຍ່ການເມືອງປ້ອງກັນຄວາມສະຫງົບ. ພະນັກງານທີ່ຮັບຜິດຊອບບັນດາຕຳແໜ່ງ ດັ່ງກ່າວນັ້ນມີຄວາມຮັບຜິດຊອບ ໂດຍກົງຕໍ່ຂັ້ນເທິງໃນການປະຕິບັດໜ້າທີ່ວຽກງານ ຂອງຕົນ.

**ມາດຕາ 7: ການຈັດຕັ້ງຢູ່ຂັ້ນທ້ອງຖິ່ນ.**

7.1. ຢູ່ແຂວງ, ນະຄອນຫຼວງ ແມ່ນສ້າງຕັ້ງເປັນກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ນະຄອນຫຼວງ; ຢູ່ເມືອງ ແມ່ນສ້າງຕັ້ງເປັນກອງບັນຊາການປ້ອງກັນຄວາມສະຫງົບເມືອງ ເພື່ອເຮັດໜ້າທີ່ເປັນຫົວໜ່ວຍຄຸ້ມຄອງ, ບັນຊາແລະຈັດຕັ້ງປະຕິບັດວຽກງານປ້ອງກັນຄວາມສະຫງົບ ໂດຍກົງຢູ່ແຕ່ລະທ້ອງຖິ່ນ ທັງເປັນຜູ້ຕາງໜ້າຂອງກະຊວງປ້ອງກັນຄວາມສະຫງົບປະຈຳຢູ່ແຂວງ, ນະຄອນຫຼວງ.

7.2. ຢູ່ກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ນະຄອນຫຼວງ ມີບັນດາຫ້ອງ ແລະ ກອງວິຊາສະເພາະຂຶ້ນກັບ; ຢູ່ກອງບັນຊາການປ້ອງກັນຄວາມສະຫງົບເມືອງມີບັນດາພະແນກ ແລະ ປ ກ ສ ກຸ່ມບ້ານ ຂຶ້ນກັບ.

## ໝວດທີ IV

## ວ່າດ້ວຍລະບອບວິທີເຮັດວຽກຂອງກະຊວງປ້ອງກັນຄວາມສະຫງົບ

**ມາດຕາ 8:** ກະຊວງປ້ອງກັນຄວາມສະຫງົບເຮັດວຽກຕາມຫຼັກການດັ່ງນີ້:

8.1. ເຮັດວຽກຕາມຫຼັກການລວມສູນປະຊາທິປະໄຕ ປຶກສາຫາລືເປັນໝູ່ຄະນະແບ່ງງານ ໃຫ້ບຸກຄົນຮັບຜິດຊອບ ຢ່າງຈະແຈ້ງແລະ ເຂັ້ມງວດ.

8.2. ເຮັດວຽກຢ່າງມີແຜນການ, ມີກຳນົດ,ມີການຈັດຕັ້ງການປະສານສົມທົບ, ມີການຕິດຕາມກວດກາເປັນປົກກະຕິ, ແທດເຖິງກັບຮາກຖານ, ມີການສະຫລຸບຕີລາຄາ ແລະ ຖອດຖອນບົດຮຽນ.

8.3. ເຮັດວຽກມີການແບ່ງຂັ້ນຄຸ້ມຄອງ, ແບ່ງງານໃຫ້ແຕ່ລະຄົນ, ແຕ່ລະການຈັດຕັ້ງຢ່າງລະອຽດ, ການມອບວຽກງານຕ້ອງຕິດພັນກັບການມອບສິດ ແລະ ນະໂຍບາຍຢ່າງຈະແຈ້ງ, ສ້າງເງື່ອນໄຂໃຫ້ທຸກຄົນເສີມຂະຫຍາຍຫົວຄິດປະດິດສ້າງ, ຍົກສູງຄວາມຮັບຜິດຊອບເປັນເຈົ້າຕົນເອງ.

8.4. ປະຕິບັດລະບອບປະຈຳການກຽມພ້ອມສູ້ຮົບໃນທຸກເວລາ, ປະຊຸມສ່ອງແສງປະຈຳອາທິດຂອງຄະນະນຳກະຊວງໂດຍມີການບັນທຶກຜົນຂອງກອງປະຊຸມ, ທຸກວຽກງານທີ່ໄດ້ປະຕິບັດສຳເລັດຢ່າງສົມບູນນັ້ນຕ້ອງສ້າງເປັນເອກະສານຢັ້ງຢືນທາງການ ເພື່ອລາຍງານຕໍ່ລັດຖະບານ.

8.5. ສະຫຼຸບປະຈຳເດືອນ, 3 ເດືອນ, 6 ເດືອນ ແລະ ປະຈຳປີ ເພື່ອສັງເກດຕີລາຄາດ້ານດີ, ດ້ານອ່ອນຂໍ້ຄົງຄ້າງໃນການເຄື່ອນໄຫວວຽກງານ ແລະ ກຳນົດທິດທາງແຜນການສືບຕໍ່ປະຕິບັດວຽກງານໃນແຕ່ລະໄລຍະ.

## ໝວດທີ V
## ວ່າດ້ວຍບົດບັນຍັດສຸດທ້າຍ

**ມາດຕາ 9:** ກະຊວງປ້ອງກັນຄວາມສະຫງົບ ພ້ອມດ້ວຍຫ້ອງວ່າການກະຊວງ, ບັນດາກົມໃຫຍ່, ກົມ, ກອງບັນຊາການ, ວິທະຍາຄານປ້ອງກັນຄວາມສະຫງົບແຫ່ງຊາດ ແລະ ພະແນກການ, ກອງວິຊາສະເພາະຕ່າງໆ ທີ່ມີຄວາມຈຳເປັນອະນຸຍາດໃຫ້ມີກາປະທັບຂອງຕົນ ເພື່ອນຳໃຊ້ເຂົ້າໃນວຽກງານລັດຖະການ.

**ມາດຕາ 10:** ມອບໃຫ້ລັດຖະມົນຕີວ່າການ ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ກຳນົດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຫ້ອງວ່າການກະຊວງ, ບັນດາກົມໃຫຍ່, ກົມ, ກອງບັນຊາການ, ວິທະຍາຄານປ້ອງກັນຄວາມສະຫງົບແຫ່ງຊາດ, ກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ນະຄອນຫຼວງ, ກອງບັນຊາການປ້ອງກັນຄວາມສະຫງົບເມືອງແລະ ອື່ນໆໃຫ້ລະອຽດ.

**ມາດຕາ 11:** ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 136/ນຍ, ລົງວັນທີ 03 / 09 / 2003 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງປ້ອງກັນຄວາມສະຫງົບ.

**ນາຍົກລັດຖະມົນຕີແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

ບົວສອນ ບຸບຜາວັນ